# ປຶ້ມເຝິກຫັດ

# ໜ່ວຍທຳມະຊາດອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາປີທີ 1



ກະຊວງສຶກສາທິການ ແລະ ກິລາ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

2012

ປຶ້ມເຝິກຫັດ ໜ່ວຍທຳມະຊາດອ້ອມຕົວເຮົາ ຊັ້ນອະນຸບານສຶກສາປີທີ 1 2012

ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທີນ 2)
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2012

# ປຶ້ມຝຶກຫັດ

# ເນື້ອໃນໜ່ວຍການສອນ

# ທຳມະຊາດອ້ອມຕົວເຮົາ

# ສຳລັບເດັກ

# ອະນຸບານ ປີທີ 1


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ

ກວດແກ້ໂດຍ: ພວງຄຳ ສົມສະນິດ
ທອງແກ້ວ ອາສາ
ສົມບູນ ມາສຸວັນ
ເກດ ພັນຮັກ
ສີພາພອນ ມະນີວັນ
ວຽງແກ້ວ ພົມມະຈັກ
ມະນີວອນ ອາດຜາສຸກ
ພູມີ ພົມມະວົງ

ເຮົ້າໜ້າໂດຍ: ຈັນທະໄລ ເກີດຫຼ້າ
ທອງດຳ ທອງສິນ



ກະຊວງສຶກສາທິການ
ສະຖາບັນຄົ້ນຄວ້າ ວິທະຍາສາດ ການສຶກສາ
2012

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປ

ກ່ຽວກັບວິທະຍາສາດໃຫ້ແກ່ເດັກດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກໄດ້ສັງເກດ, ທົດລອງ, ຄົ້ນຄິດມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກມັກ ແລະ ສົນໃຈຮຽນວິທະຍາສາດຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍທຳມະຊາດອ້ອມຕົວເຮົາເຫຼັ້ມນີ້ ຮຽບຮຽງຂຶ້ນເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກອາຍຸ 3-4 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບທຳມະຊາດອ້ອມຕົວເຮົາມີດັ່ງນີ້:

1. ສິ່ງທີ່ມີຊີວິດ.
2. ສິ່ງທີ່ບໍ່ມີຊີວິດ.
3. ລະດູການ.
4. ກາງເວັນ ແລະ ກາງຄືນ.

ການນຳໃຊ້ປຶ້ມບົດເຝິກຫັດໜ່ວຍທຳມະຊາດອ້ອມຕົວເຮົາເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາ ແລ້ວ, ພ້ອມກັບນັ້ນ ຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ

**ຫົວຂໍ້:** **ໜ້າ**


**ກິດຈະກຳການຮຽນ-ການສອນ ໜ່ວຍທຳມະຊາດອ້ອມຕົວເຮົາສຳລັບ ຊັ້ນອະນຸບານປີທີ 1**........ 1
ສິ່ງທີ່ມີຊີວິດ........ 2
ສິ່ງທີ່ມີຊີວິດ (ຕໍ່)........ 3
ການຈະເລີນເຕີບໃຫຍ່ຂອງຄົນຕາມໄວອາຍຸ........ 4
ການຈະເລີນເຕີບໃຫຍ່ຂອງຄົນຕາມໄວອາຍຸ (ຕໍ່)........ 5
ການຈະເລີນເຕີບໃຫຍ່ຂອງຄົນຕາມໄວອາຍຸ (ຕໍ່)........ 6
ສັດ........ 7
ສັດ (ຕໍ່)........ 8
ສັດ (ຕໍ່)........ 9
ຜັກ........ 10
ແມງໄມ້........ 11
ແມງໄມ້ (ຕໍ່)........ 12
ສິ່ງທີ່ບໍ່ມີຊີວິດ........ 13
ສິ່ງທີ່ບໍ່ມີຊີວິດ (ຕໍ່)........ 14
ນໍ້າ........ 15
ຊາຍ........ 16
ດິນ........ 17
ຫີນ........ 18
ລະດູການ........ 19
ສະພາບອາກາດໃນປະເທດລາວ........ 20
ການປະຕິບັດຕົນໃນຍາມຝົນຕົກ........ 21
ການປະຕິບັດຕົນໃນຍາມຮ້ອນ........ 22
ການປະຕິບັດຕົນໃນຍາມໜາວ........ 23
ການປະຕິບັດຕົນໃນຍາມໜາວ (ຕໍ່)........ 24
ປະໂຫຍດຂອງຝົນ........ 25
ປະໂຫຍດຂອງຝົນ (ຕໍ່)........ 26
ຜົນສະທ້ອນຂອງຝົນ........ 27

ພາງເວັນ ແລະ ພາງຄືນ........................................................................................ 28
ພາງເວັນ.......................................................................................................... 29
ພາງຄືນ........................................................................................................... 30
ປະໂຫຍດຂອງແສງແດດ....................................................................................... 31
ຜົນສະທ້ອນຂອງແສງແດດ.................................................................................... 32
ກິດຈະວັດປະຈຳວັນ............................................................................................ 33
ກິດຈະວັດປະຈຳວັນ (ຕໍ່)...................................................................................... 34
ກິດຈະວັດປະຈຳວັນ (ຕໍ່)...................................................................................... 35
ກິດຈະວັດປະຈຳວັນ (ຕໍ່)...................................................................................... 36

# ກິດຈະກຳການຮຽນ-ການສອນ
# ໜ່ວຍ: ທຳມະຊາດອ້ອມຕົວເຮົາ

### ສຳລັບຊັ້ນອະນຸບານປີທີ1



**ເນື້ອໃນການຮຽນຂອງໜ່ວຍທຳມະຊາດອ້ອມຕົວເຮົາປະກອບມີ:**

1. ສິ່ງທີ່ມີຊີວິດ.
2. ສິ່ງທີ່ບໍ່ມີຊີວິດ.
3. ລະດູການ.
4. ກາງເວັນ ແລະ ກາງຄືນ.

# ສິ່ງທີ່ມີຊີວິດ







**ເນື້ອໃນການຮຽນຂອງຫົວຂໍ້ ສິ່ງທີ່ມີຊີວິດປະກອບມີ:**

1. ສິ່ງທີ່ມີຊີວິດ.
2. ການຈະເລີນເຕີບໃຫຍ່ຂອງຄົນຕາມອາຍຸ.
3. ສັດ.
4. ຜັກ.
5. ແມງໄມ້.

# ສິ່ງທີ່ມີຊີວິດ









**ຈຸດປະສົງ:** ເພື່ອໃຫ້ເດັກບອກສິ່ງທີ່ມີຊີວິດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຄົນ, ສັດ, ແມງໄມ້ ແລະ ພືດຕ້ອງການກິນອາຫານບໍ?
- ສະຫຼຸບ: ຄົນ, ສັດ, ແມງໄມ້ ແລະ ພືດ ແມ່ນສິ່ງທີ່ມີຊີວິດ.
- ທາສີຮູບຄົນ, ຕົ້ນໄມ້ ແລະ ສັດ ໂດຍນຳໃຊ້ສີຕາມໃຈ.

# ການຈະເລີນເຕີບໃຫຍ່ຂອງຄົນຕາມອາຍຸ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຈະເລີນເຕີບໃຫຍ່ຂອງຄົນຕາມອາຍຸ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນໃຜໃນຮູບນີ້?
- ສະຫຼຸບ: ຮູບທີ່ຫຼານເຫັນ ເອີ້ນວ່າ ເດັກນ້ອຍ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການຈະເລີນເຕີບໃຫຍ່ຂອງຄົນຕາມອາຍຸ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກການຈະເລີນເຕີບໃຫຍ່ຂອງຄົນຕາມອາຍຸ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນໃຜແດ່ໃນຮູບນີ້?
- ສະຫຼຸບ: ຮູບທີ່ຫຼານເຫັນ ເອີ້ນວ່າ ຜູ້ໃຫຍ່.
- ທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ການຈະເລີນເຕີບໃຫຍ່ຂອງຄົນຕາມອາຍຸ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຈະເລີນເຕີບໃຫຍ່ຂອງຄົນຕາມອາຍຸ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນໃຜໃນຮູບນີ້? ຫຼານມີພໍ່ເຖົ້າ, ແມ່ເຖົ້າບໍ?
- ສະຫຼຸບ: ຮູບທີ່ຫຼານເຫັນນີ້ເອີ້ນວ່າ ຜູ້ເຖົ້າ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ສັດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ສັດ ແລະ ທີ່ຢູ່ອາໄສ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນສັດຫຍັງໃນຮູບນີ້? ປາອາໄສຢູ່ບ່ອນໃດ?
- ສະຫຼຸບ: ສັດທີ່ຫຼານເຫັນແມ່ນ ປາອາໄສຢູ່ໃນນ້ຳ.
- ທາສີຮູບປາ ໂດຍນຳໃຊ້ສີຕາມໃຈ.

# ສັດ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ສັດ ແລະ ທີ່ຢູ່ອາໄສ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນສັດຫຍັງໃນຮູບນີ້? ໄກ່ອາໄສ ຢູ່ບ່ອນໃດ?
- ສະຫຼຸບ: ສັດທີ່ຫຼານເຫັນແມ່ນ ໄກ່ອາໄສຢູ່ໃນລົກ.
- ທາສີຮູບໄກ່ ໂດຍນໍາໃຊ້ສີຕາມໃຈ.

# ສັດ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ສັດ ແລະ ທີ່ຢູ່ອາໄສ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນສັດຫຍັງໃນຮູບນີ້? ໝູອາໄສຢູ່ບ່ອນໃດ?
- ສະຫຼຸບ: ສັດທີ່ຫຼານເຫັນແມ່ນ ໝູອາໄສຢູ່ໃນຄອກ.
- ທາສີຮູບໝູ ໂດຍນໍາໃຊ້ສີຕາມໃຈ.

# ຜັກ









**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ຜັກ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຜັກຫຍັງແດ່ໃນຮູບນີ້? ຫຼານ ເຄີຍໄດ້ກິນຜັກຫຍັງແດ່?
- ສະຫຼຸບ: ຜັກມີຫຼາຍຊະນິດ ເຊັ່ນ: ຜັກກາດຂາວ, ຜັກບົ້ງ, ດອກແຄ ແລະ ໝາກເຂືອ
- ທາສີຮູບຜັກ ໂດຍນຳໃຊ້ສີຕາມໃຈ.

# ແມງໄມ້



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ແມງໄມ້ ແລະ ທີ່ຢູ່ອາໄສ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ ຫຼານເຫັນແມງໄມ້ຫຍັງ? ແມງມຸມອາໄສຢູ່ໃສ?
- ສະຫຼຸບ: ແມງໄມ້ໃນຮູບນີ້ແມ່ນແມງມຸມ, ມັນອາໄສຢູ່ຕາມເສັ້ນໃຍ.
- ທາສີຮູບແມງມຸມ ໂດຍນໍາໃຊ້ສີຕາມໃຈ.

# ແມງໄມ້ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ແມງໄມ້ ແລະ ທີ່ຢູ່ອາໄສ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ ຫຼານເຫັນແມງໄມ້ຫຍັງ? ຍຸງມັກ ອາໄສຢູ່ໃສ?
- ສະຫຼຸບ: ແມງໄມ້ໃນຮູບນີ້ແມ່ນຍຸງ, ມັນອາໄສຢູ່ບ່ອນມືດ ແລະ ໃນປ່າ.
- ທາສີຮູບຍຸງ ໂດຍນຳໃຊ້ສີຕາມໃຈ.

# ສິ່ງທີ່ບໍ່ມີຊີວິດ





**ເນື້ອໃນການຮຽນຂອງຫົວຂໍ້ສິ່ງທີ່ບໍ່ມີຊີວິດປະກອບມີ:**

1. ສິ່ງທີ່ບໍ່ມີຊີວິດ.
2. ນໍ້າ.
3. ຊາຍ.
4. ດິນ.
5. ຫີນ.

# ສິ່ງທີ່ບໍ່ມີຊີວິດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກສິ່ງທີ່ບໍ່ມີຊີວິດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຄີຍເຫັນ ນ້ຳ, ຫີນ, ດິນ, ຊາຍບໍ?
- ສະຫຼຸບ: ສິ່ງທີ່ບໍ່ມີຊີວິດມີ ນ້ຳ, ຫີນ, ດິນ, ຊາຍ.
- ທາສີຮູບຕົ້ນໄມ້, ຫີນ, ນ້ຳ ໂດຍນຳໃຊ້ສີຕາມໃຈ.

# ນ້ຳ







**ຈຸດປະສົງ:** ເພື່ອໃຫ້ເດັກບອກ ນ້ຳອຸ່ນ, ນ້ຳເຢັນ ແລະ ນ້ຳກ້ອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍໄດ້ດື່ມນ້ຳອຸ່ນ, ນ້ຳເຢັນບໍ?
- ສະຫຼຸບ: ນ້ຳ ມີນ້ຳອຸ່ນ, ນ້ຳເຢັນ ແລະ ນ້ຳກ້ອນ.
- ທາສີຮູບໝໍ້ນ້ຳ ແລະ ຈອກນ້ຳ ໂດຍນຳໃຊ້ສີຕາມໃຈ.

# ຊາຍ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊາຍປຽກ ແລະ ຊາຍແຫ້ງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຫຼານເຄີຍຫຼິ້ນຊາຍບໍ? ຫຼານເຄີຍເອົານ້ຳຖອກໃສ່ຊາຍບໍ?
- ສະຫຼຸບ: ຊາຍມີ ຊາຍປຽກ ແລະ ຊາຍແຫ້ງ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ດິນ



ດິນອ່ອນ



ດິນແຂງ

**ຈຸດປະສົງ:** ເພື່ອໃຫ້ເດັກບອກຄວາມແຕກຕ່າງ ແລະ ສີຂອງດິນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ດິນເປັນສີຫຍັງ? ຫຼານເຄີຍເຫັນດິນອ່ອນ ຫຼື ດິນແຂງ?
- ສະຫຼຸບ: ດິນມີທັງດິນອ່ອນ, ດິນແຂງ ແລະ ມີສີແດງ, ດຳ.
- ທາສີຮູບດິນ ໂດຍນຳໃຊ້ສີຕາມໃຈ.

# ຫີນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກ ຄວາມແຕກຕ່າງຂອງກ້ອນຫີນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍເຫັນກ້ອນຫີນບໍ? ເວລາຈັບບາຍກ້ອນຫີນ ຈະມື່ນ ຫຼື ຊາ?
- ສະຫຼຸບ: ຫີນມີກ້ອນນ້ອຍ, ໃຫຍ່, ເວລາຈັບບາຍ ບາງກ້ອນຈະມື່ນ ບາງກ້ອນຈະຊາ.
- ທາສີຮູບຫີນ ໂດຍນຳໃຊ້ສີຕາມໃຈ.

# ລະດູການ



**ເນື້ອໃນການຮຽນຂອງຫົວຂໍ້ລະດູການປະກອບມີ:**

1. ສະພາບອາກາດໃນປະເທດລາວ.
2. ປະຕິບັດຕົນໃນເວລາຝົນຕົກ.
3. ປະຕິບັດຕົນໃນຍາມຮ້ອນ.
4. ປະຕິບັດຕົນໃນຍາມໜາວ.
5. ປະໂຫຍດ ແລະ ໂທດ ຂອງຝົນ.

# ສະພາບອາກາດໃນບ້ານເຮົາ







**ຈຸດປະສົງ:** ເພື່ອໃຫ້ເດັກບອກ ສະພາບອາກາດໃນປະເທດລາວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເວລາແດດອາກາດຈະເປັນແນວໃດ? ໃນຍາມໜາວ ອາກາດຈະເປັນແນວໃດ? ເວລາຝົນຕົກ ອາກາດຈະເປັນແນວໃດ?
- ສະຫຼຸບ: ອາກາດໃນບ້ານເຮົາມີ ໜາວ, ຮ້ອນ ແລະ ຝົນ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຍາມຝົນຕົກ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການປະຕິບັດຕົນໃນເວລາຝົນຕົກ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ ກຳລັງເຮັດຫຍັງ? ເວລາຝົນຕົກ ຄວນເຮັດແນວໃດ? ອອກຈາກເຮືອນເວລາຝົນຕົກເຮັດແນວໃດ?
- ສະຫຼຸບ: ເວລາຝົນຕົກຕ້ອງຢູ່ໃນເຮືອນ, ເວລາອອກຈາກເຮືອນ ຕ້ອງນຸ່ງເສື້ອກັນຝົນ ຫຼື ກັ້ງຄັນຮົ່ມ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຍາມຮ້ອນ







**ຈຸດປະສົງ:** ເພື່ອໃຫ້ເດັກບອກ ການປະຕິບັດຕົນໃນຍາມຮ້ອນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເດັກນ້ອຍໃນຮູບກຳລັງເຮັດຫຍັງ? ຍາມຮ້ອນຄວນປະຕິບັດຕົນແນວໃດ?
- ສະຫຼຸບ: ຍາມຮ້ອນຕ້ອງນຸ່ງເຄື່ອງບາງ, ດື່ມນ້ຳຫຼາຍໆ , ກິນອາຫານທີ່ສຸກສະອາດ, ບໍ່ອອກຕາກແດດ ແລະ ຖ້າອອກເຮືອນຕ້ອງກັ້ງຄັນຮົ່ມ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຍາມໜາວ



**ຈຸດປະສົງ:** ເພື່ອໃຫ້ເດັກບອກ ການປະຕິບັດຕົນໃນຍາມໜາວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຍາມໜາວຫຼານນຸ່ງເຄື່ອງແນວໃດ?
- ສະຫຼຸບ: ຍາມໜາວ ຕ້ອງນຸ່ງເສື້ອໜາ, ໂສ້ງໜາ, ໃສ່ໝວກໃຫ້ອຸ່ນ, ໃສ່ຖົງຕີນ, ຖົງມື
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນຍາມໜາວ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກ ການປະຕິບັດຕົນໃນຍາມໜາວ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຍາມໜາວ ຫຼາຍຄວນດື່ມນ້ຳອຸ່ນ ຫຼື ນ້ຳ ເຢັນ?
- ສະຫຼຸບ: ຍາມໜາວ ຕ້ອງດື່ມນ້ຳອຸ່ນ.
- ທາສີຮູບຄົນ ແລະ ໝໍ້ຕົ້ມນ້ຳ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດຂອງຝົນ





**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງຝົນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນກຳລັງເຮັດຫຍັງໃນຮູບນີ້? ຝົນໃຫ້ຫຍັງແກ່ເຮົາ?
- ສະຫຼຸບ: ຝົນພາໃຫ້ເຮົາມີນ້ຳກິນ ແລະ ນ້ຳໃຊ້.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດຂອງຝົນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງຝົນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຕົ້ນໄມ້ ແລະ ດອກໄມ້ໃນຮູບນີ້ງາມບໍ? ຖ້າຝົນບໍ່ຕົກຕົ້ນໄມ້ ແລະ ດອກໄມ້ຈະເປັນແນວໃດ?
- ສະຫຼຸບ: ຝົນພາໃຫ້ພືດຂຽວງາມ ແລະ ຈະເລີນເຕີບໂຕ.
- ທາສີຮູບເດັກ ແລະ ໝາກໄມ້ ແລະ ດອກໄມ້ ໂດຍນຳໃຊ້ສີຕາມໃຈ.

# ຜົນສະທ້ອນຂອງຝົນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຜົນສະທ້ອນຂອງຝົນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຖ້າຝົນຕົກຫຼາຍ ຈະເປັນແນວໃດ?
- ສະຫຼຸບ: ຖ້າຝົນຕົກຫຼາຍຈະເຮັດໃຫ້ນ້ຳຖ້ວມ, ເດີນທາງບໍ່ສະດວກ.
- ທາສີຮູບຕົ້ນໄມ້ ແລະ ເຮືອນ ໂດຍນຳໃຊ້ສີຕາມໃຈ.

# ກາງເວັນ ແລະ ກາງຄືນ





**ເນື້ອໃນການຮຽນຂອງຫົວຂໍ້ ກາງເວັນ ແລະ ກາງຄືນປະກອບມີ:**

1. ກາງເວັນ.
2. ກາງຄືນ.
3. ປະໂຫຍດຂອງແສງແດດ.
4. ໂທດຂອງແສງແດດ.
5. ກິດຈະວັດປະຈຳວັນ.

# ກາງເວັນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກລັກສະນະຂອງທ້ອງຟ້າຍາມກາງເວັນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານໄປໂຮງຮຽນ ຍາມໃດ? ກາງເວັນທ້ອງຟ້າເປັນແນວໃດ?
- ສະຫຼຸບ: ກາງເວັນທ້ອງຟ້າແຈ້ງ, ມີຕາເວັນ ແລະ ເມກ.
- ທາສີຮູບເຮືອນ, ຕົ້ນໄມ້ ແລະ ຕາເວັນ ໂດຍນຳໃຊ້ສີຕາມໃຈ.

# ກາງຄືນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກລັກສະນະຂອງທ້ອງຟ້າໃນຍາມກາງຄືນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຂົ້ານອນຍາມໃດ? ກາງຄືນທ້ອງຟ້າເປັນແນວໃດ?
- ສະຫຼຸບ: ກາງຄືນ ທ້ອງຟ້າມືດ, ມີເດືອນ ແລະ ດາວ.
- ທາສີຮູບເຮືອນ, ຕົ້ນໄມ້ ແລະ ດາວ ໂດຍນຳໃຊ້ສີຕາມໃຈ.

# ປະໂຫຍດຂອງແສງແດດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກປະໂຫຍດຂອງແສງແດດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ເວລາຊັກເຄື່ອງຄວນເອົາໄປຕາກໄວ້ບ່ອນໃດ?
- ສະຫຼຸບ: ແສງແດດໃຫ້ແສງສະຫວ່າງ ແລະ ຕາກເຄື່ອງແຫ້ງ.
- ທາສີຮູບເດັກນ້ອຍ ແລະ ເຄື່ອງນຸ່ງ ໂດຍນຳໃຊ້ສີຕາມໃຈ.

# ຜົນສະທ້ອນຂອງແສງແດດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຜົນສະທ້ອນຂອງແສງແດດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຕົ້ນໄມ້ເປັນຫຍັງ ຈຶ່ງບໍ່ງາມ?
- ສະຫຼຸບ: ແດດຫຼາຍອາກາດຮ້ອນ, ຕົ້ນໄມ້ຕາຍ ແລະ ນ້ຳແຫ້ງ.
- ທາສີຮູບຕາເວັນ, ພູ ແລະ ຕົ້ນໄມ້ ໂດຍນຳໃຊ້ສີຕາມໃຈ.

# ກິດຈະວັດປະຈຳວັນ









**ຈຸດປະສົງ:** ເພື່ອໃຫ້ເດັກບອກກິດຈະກຳປະຈຳວັນ.

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ ກຳລັງເຮັດຫຍັງ? ຫຼານເຮັດຄືເດັກນ້ອຍໃນຮູບນີ້ບໍ?
- ສະຫຼຸບ: ຕອນເຊົ້າທຳຄວາມສະອາດຮ່າງກາຍ: ຖູແຂ້ວ, ອາບນ້ຳ, ລ້າງໜ້າ, ນຸ່ງເຄື່ອງ, ກິນເຂົ້າ ແລ້ວໄປໂຮງຮຽນ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ກິດຈະວັດປະຈຳວັນ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກ ກິດຈະວັດປະຈຳວັນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຕອນທ່ຽງຫຼານເຮັດຫຍັງແດ່?
- ສະຫຼຸບ: ຕອນທ່ຽງ ພວກຫຼານກິນເຂົ້າທ່ຽງ, ນອນພັກທ່ຽງ, ຮຽນ ແລະ ຫຼິ້ນ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.

# ກິດຈະວັດປະຈຳວັນ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກ ກິດຈະວັດປະຈຳວັນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຕອນແລງ ພວກຫຼານເຮັດຫຍັງແດ່?
- ສະຫຼຸບ: ຕອນແລງ: ກັບບ້ານ, ອາບນ້ຳ ແລະ ກິນເຂົ້າ.
- ທາສີຮູບເດັກນ້ອຍກິນເຂົ້າ ແລະ ອາບນ້ຳ ໂດຍນຳໃຊ້ສີຕາມໃຈ.

# ກິດຈະວັດປະຈຳວັນ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກ ກິດຈະວັດປະຈຳວັນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຕອນຄໍ່າຫຼານເຮັດຫຍັງແດ່?
- ສະຫຼຸບ: ຕອນຄໍ່າ ເບິ່ງປຶ້ມ ແລະ ນອນ.
- ທາສີຮູບເດັກນ້ອຍນອນ ແລະ ຮຽນ ໂດຍນຳໃຊ້ສີຕາມໃຈ.